**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ**

**ບໍລິສັດ ດັກລັກ ຣັບເບີ ຈໍາກັດ**

**DAKLAORUCO** ເລກທີ: 14/ລບ-ບສ

*ປາກເຊ, ວັນທີ 30 ເດືອນ 06 ປີ 2023*

# ກົດລະບຽບ

## ວ່າດ້ວຍການຄຸ້ມຄອງ ແລະ ປົກປັກຮັກສາປ່າໄມ້ໃນຂອບເຂດການຄຸ້ມຄອງຂອງບໍລິສັດ

- ອີງຕາມກົດໝາຍວ່າດ້ວຍປ່າໄມ້ຂອງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ປີ 2019;
- ອີງຕາມມາດຕະຖານການຄຸ້ມຄອງປ່າໄມ້ແບບຍືນຍົງ FSC-STD-LAO-01-2020;
- ພິຈາລະນາການສະເໜີຂອງຄະນະ FSC ຂອງບໍລິສັດ.

## ພາກທີ I
## ຂໍ້ກໍານົດລວມ

**ມາດຕາ 1.** ຂອບເຂດການປັບປຸງ

ກົດລະບຽບວ່າດ້ວຍການຄຸ້ມຄອງ ແລະ ປົກປັກຮັກສາປ່າໄມ້ໃນຂອບເຂດການຄຸ້ມຄອງປ່າໄມ້ ແລະ ທີ່ດິນປ່າໄມ້ ຂອງບໍລິສັດ.

**ມາດຕາ 2.** ເປົ້າໝາຍນໍາໃຊ້

ກົດລະບຽບສະບັບນີ້ນໍາໃຊ້ສໍາລັບພະນັກງານກໍາມະກອນ ແລະ ໜ່ວຍງານນສັງກັດຢູ່ບໍລິສັດ.

**ມາດຕາ 3.** ສໍາລັບການກະທໍາຕໍ່ໄປນີ້, ຜູ້ລະເມີດຕ້ອງຮັບຜິດຊອບ ແລະ ຖືກແກ້ໄຂຕາມກົດລະບຽບສະບັບນີ້:

1. ບໍ່ປະຕິບັດຕາມຂໍ້ກໍານົດໃນກົດລະບຽບສະບັບນີ້.
2. ບໍ່ຈັດຕັ້ງການກວດກາ, ກວດພົບ ແລະ ລາຍງານສະພາບການລະເມີດການຄຸ້ມຄອງ ແລະ ປົກປັກຮັກສາປ່າໄມ້ໃຫ້ທັນເວລາ.
3. ມີລັກສະນະບໍ່ນໍາຄືນການລະເມີດ, ປ່ອຍປະ, ປົກປິດຊ່ວຍຜູ້ທີ່ຢູ່ພາຍໃຕ້ການຄຸ້ມຄອງຂອງຕົນ ຫຼື ຜູ້ອື່ນເພື່ອຫຼີກລ້ຽງຄວາມຮັບຜິດຊອບ.
4. ບໍ່ມີໜ້າທັນເວລາຢູ່ຈຸດທີ່ມີການລະເມີດເຮັດໃຫ້ເກີດຄວາມເສຍຫາຍຕໍ່ປ່າໄມ້, ທີ່ດິນປ່າ ໄມ້ ແລະ ບໍ່ມີມາດຕະການປ້ອງກັນໃຫ້ໃຫ້ທັນເວລາ.

## ພາກທີ II
## ເນື້ອໃນຂອງການຄຸ້ມຄອງ ແລະ ປົກປັກຮັກສາປ່າໄມ້

**ມາດຕາ 4.** ການຄຸ້ມຄອງພື້ນທີ່ປ່າໄມ້ ແລະ ທີ່ດິນປ່າໄມ້

1. ຈັດຕັ້ງປະຕິບັດແຜນການຄຸ້ມຄອງປ່າໄມ້ແບບຍືນຍົງໄລຍະ 2024-2054 ຂອງບໍລິສັດທີ່ໄດ້ຮັບການອະນຸມັດຢ່າງເຂັ້ມງວດ.
2. ຫ້າມບໍ່ໃຫ້ມີການຫັນປ່ຽນຈຸດປະສົງນໍາໃຊ້ປ່າຢ່າງຜິດກົດໝາຍເຊັ່ນ: ການກໍ່ສ້າງທີ່ຜິດກົດໝາຍໃນທີ່

ດິນປ່າໄມ້, ທັບປ່ຽນປ່າ ແລະ ທີ່ດິນປ່າໄມ້ມາປູກພືດກະສິກຳ ຫຼື ເພື່ອຈຸດປະສົງອື່ນໆ.

3. ຫ້າມບໍ່ໃຫ້ບຸກລຸກປ່າ ແລະ ທີ່ດິນປ່າໄມ້ທີ່ລັດມອບໝາຍໃຫ້ບໍລິສັດຄຸ້ມຄອງ, ນຳໃຊ້ ຫຼື ບໍລິສັດເຊົ່າຈາກຜູ້ອື່ນ.

4. ເມື່ອກວດພົບ, ໃຫ້ສະກັດກັ້ນຢ່າງທັນທີ, ແລະ ລາຍງານໃຫ້ຄະນະນຳບໍລິສັດ ກ່ຽວກັບການຂຸດຄົ້ນຊັບພະຍາກອນທຳມະຊາດ, ຊັບພະຍາກອນແຮ່ທາດ ແລະ ສິ່ງແວດລ້ອມທີ່ຜິດລະບຽບກົດໝາຍ; ກິດຈະການກໍ່ສ້າງ, ຂຸດ,ຄວັດ, ເຮັດຝາຍຕັນສາຍນ້ຳທຳມະຊາດ ແລະ ວຽກງານອື່ນໆ ທີ່ຜິດລະບຽບກົດໝາຍ ທີ່ເຮັດໃຫ້ ໂຄງສ້າງພູມສັນຖານທຳມະຊາດຂອງລະບົບນິເວດປ່າໄມ້ພາຍໃນປ່າ ແລະ ທີ່ດິນປ່າໄມ້ຂອງບໍລິສັດມີປ່ຽນແປງ.

5. ຫ້າມຍ້າຍຫຼັກໝາຍເຂດແດນ, ເຂດແດນປ່າໄມ້, ທີ່ດິນປ່າໂດຍບໍ່ໄດ້ຮັບການອະນຸຍາດຈາກບໍລິສັດ.

**ມາດຕາ 5.** ການປົກປັກຮັກສາພືດທີ່ເກີດຢູ່ປ່າ

1. ປະຕິບັດຕາມຫຼັກການຂຸດຄົ້ນຢ່າງຖືກຕ້ອງ ແລະ ແນະນຳການຂຸດຄົ້ນທີ່ມີຜົນກະທົບໜ້ອຍທີ່ສຸດລວມທັງການຂຸດຄົ້ນໄມ້ ແລະ ຢາງພາລາ.

2. ຫ້າມບໍ່ໃຫ້ຕັດໄມ້ທຳລາຍປ່າ, ເກັບກ່ຽວ ຫຼື ຂຸດຄົ້ນປ່າທີ່ຜິດກົດໝາຍ ໂດຍສະເພາະ ແມ່ນປະເພດພືດທີ່ໃກ້ຈະສູນພັນ ແລະ ຫາຍາກ ລວມທັງສະຖານທີ່ທີ່ບໍ່ໄດ້ຮັບອະນຸຍາດ.

3. ຫ້າມຊື້, ຂາຍ, ເກັບຮັກສາ ຫຼື ຂົນສົ່ງໄມ້ ແລະ ເຄື່ອງປ່າຂອງດົງທີ່ຜິດກົດໝາຍ.

**ມາດຕາ 6.** ການປົກປັກຮັກສາສັດສາວາສິ່ງທີ່ຢູ່ໃນປ່າ

1. ມີຈິດສຳນຶກ ແລະ ຮັບຜິດຊອບໃນການປົກປັກຮັກສາສັດສາວາສິ່ງ ໂດຍສະເພາະສັດທີ່ໃກ້ຈະສູນພັນ, ຫາຍາກ ແລະ ຖືກໄພຂົ່ມຂູ່.

2. ຫ້າມລ່າ, ຍິງ, ໃສ່ກັບດັກ, ຕຶກປາ, ລ້ຽງ, ກັກຂັງ, ຂ້າ, ເກັບມ້ຽນ, ຂົນສົ່ງ, ຄ້າຂາຍສັດປ່າ ແລະ ຜະລິດຕະພັນຂອງສັດດັ່ງກ່າວທີ່ຜິດກົດໝາຍ.

3. ສຳລັບພະນັກງານກຳກອນໃນບໍລິສັດແມ່ນຮ່ວມກັນຈັດຕັ້ງປະຕິບັດຕາມເນື້ອໃນຂໍ້ທີ 1 ແລະ ຂໍ້ 2 ຂອງມາດຕານີ້ຢ່າງເຂັ້ມງວດ, ພ້ອມກັນນັ້ນກໍ່ມີໜ້າທີ່ໃນການໂຄສະນາ, ແນະນຳຊຸມຊົນໃນການຈັດຕັ້ງປະຕິບັດການປົກປັກຮັກສາສັດສາວາສິ່ງນາໆພັນຢ່າງເຂັ້ມງວດ.

**ມາດຕາ 7.** ການປົກປັກຮັກສາລະບົບນິເວດປ່າໄມ້, ວຽກງານປົກປັກຮັກສາ ແລະ ພັດທະນາປ່າໄມ້

1. ປຸກຈິດສຳນຶກກ່ຽວກັບການປົກປັກຮັກສາປ່າໄມ້ເວົ້າລວມ ແລະ ການປົກປ້ອງລະບົບນິເວດປ່າໄມ້ເວົ້າສະເພາະ, ພິເສດແມ່ນລະບົບນິເວດຂອງທ້ອງຖິ່ນ.

2. ຫຼຸດຜ່ອນຜົນກະທົບຈາກການປ່ຽນແປງພູມສັນຖານທຳມະຊາດຂອງປ່າໄມ້, ຂຸດຄົ້ນຊັບພະຍາກອນປ່າໄມ້ຢ່າງສອດຄ່ອງໂດຍສະເພາະແມ່ນການຂຸດຄົ້ນໄມ້.

3. ຈັດຕັ້ງປະຕິບັດການປົກປັກຮັກສາສັດ, ພືດ ແລະ ສິ່ງແວດລ້ອມໃຫ້ດີຕາມທີ່ໄດ້ກຳນົດໄວ້ໃນກົດລະບຽບສະບັບນີ້, ໃນນັ້ນສິ່ງທີ່ຄວນເອົາໃຈໃສ່ເປັນພິເສດແມ່ນການຄຸ້ມຄອງ, ປົກປັກຮັກສາ ແລະ ສະກັດກັ້ນຜົນກະທົບທີ່ເປັນອັນຕະລາຍຕໍ່ເນື້ອທີ່ຕາມແລວສາຍນ້ຳ, ເຂດເຊື່ອມຕໍ່ຊີວະນາໆພັນ, ແລະ ເຂດເຊື່ອມຕໍ່ແຄມນ້ຳແລະເຊື່ອມຕໍ່ໃສ່ສາຍນ້ຳ; ບັນດາແຫຼ່ງນ້ຳແລະຫນ້ານ້ຳ.

4. ຫ້າມບໍ່ໃຫ້ຈູດໝົດພື້ນທີ່ເມື່ອກຳຈັດໄມ້ແລະຫຍ້າທີ່ຢູ່ເທິງໜ້າດິນໃໝ່ ຫຼື ຫຼັງຈາກການຂຸດຄົ້ນໄມ້ເພື່ອ

ປູກປ່າ, ບົວລະບັດປ່າປູກໃໝ່, ປ່າທີ່ຍັງບໍ່ທັນຮອດເວລາຂຸດຄົ້ນ ແລະ ປ່າທີ່ກຳລັງຂຸດຄົ້ນ.

5. ຫ້າມນຳໃຊ້ແນວພັນທີ່ບໍ່ໄດ້ຮັບການອະນຸຍາດໃຫ້ນຳໃຊ້, ບໍ່ຮູ້ແຫຼ່ງທີ່ມາ. ພົບເຫັນບັນດາແນວພັນທີ່ຮຸກຮານພືດຊະນິດອື່ນໆໃຫ້ລາຍງານຄະນະນຳຂອງບໍລິສັດເພື່ອແກ້ໄຂບັນຫາໃຫ້ເໝາະສົມ.

6. ຫ້າມຫັນປ່ຽນເປົ້າໝາຍການນຳໃຊ້ປ່າໄມ້ ໂດຍສະເພາະການຫັນປ່າທຳມະຊາດມາເປັນປ່າປູກ.

7. ມີໜ້າຮັບຜິດຊອບຄຸ້ມຄອງ, ປົກປັກຮັກສາກິດຈະການການປ້ອງກັນ ແລະ ພັດທະນາປ່າໄມ້ຂອງລັດ ແລະ ບໍລິສັດ ເຊັ່ນ: ລະບົບຮົ້ວຮອງກັນໄຟໄໝ້, ປ້ອມຍາມປ້ອງກັນປ່າ, ລະບົບເສັ້ນທາງການສົ່ງອອກ, ຂົນສົ່ງ, ເສົາຫຼັກໝາຍ, ປ້າຍຊີ້ບອກ....

**ມາດຕາ 8.** ການປົກປັກຮັກສາສິ່ງແວດລ້ອມປ່າໄມ້

1. ຫ້າມຖິ້ມຂີ້ເຫຍື້ອຊະຊາຍໃນຂອບເຂດການຄຸ້ມຄອງຂອງບໍລິສັດ. ປະຕິບັດຕາມກົດລະບຽບຂອງບໍລິສັດໃນການເກັບ ແລະ ກຳຈັດສິ່ງເສດເຫຼືອຢ່າງເຂັ້ມງວດ, ຂໍ້ກຳນົດການຄວບຄຸມ ແລະ ການໃຊ້ຢາປາບສັດຕູພືດ.

2. ຫ້າມນຳເອົາສິ່ງເສດເຫຼືອ, ສານເຄມີທີ່ເປັນພິດ, ວັດຖຸລະເບີດ, ວັດຖຸໄວໄຟ, ເຄື່ອງມື ຫຼື ພາຫະນະເຂົ້າປ່າທີ່ຜິດລະບຽບກົດໝາຍ.

**ມາດຕາ 9.** ການສະກັດກັ້ນ ແລະ ຕ້ານໄຟໄໝ້ປ່າ

1. ປະຕິບັດຕາມລະບຽບການໃນແຜນການສະກັດກັ້ນ ແລະ ຕ້ານໄຟໄໝ້ປ່າຂອງບໍລິສັດຢ່າງເຂັ້ມງວດ.

2. ແຜນການສະກັດກັ້ນ ແລະ ຕ້ານໄຟໄໝ້ປ່າ ແມ່ນໄດ້ຮ່າງຂຶ້ນໃນແຕ່ລະປີ ດ້ວຍເນື້ອໃນທີ່ສອດຄ່ອງກັບກົດລະບຽບຂອງລັດ ແລະ ສອດຄ່ອງກັບລັກສະນະ ແລະ ສະພາບການອັນໃໝ່ຂອງບໍລິສັດ ແລະ ທ້ອງຖິ່ນ.

**ມາດຕາ 10.** ການປ້ອງກັນສິ່ງທີ່ມີຊີວິດທີ່ເປັນອັນຕະລາຍຕໍ່ປ່າໄມ້

1. ປະຕິບັດລະບຽບຂອງບໍລິສັດກ່ຽວກັບການຄຸ້ມຄອງພະຍາດຈາກສັດຕູພືດຢ່າງເຂັ້ມງວດ.

2. ກວດພົບໄວ ແລະ ແກ້ໄຂທັນເວລາ ມີປະສິດທິຜົນຫຼັງຈາກການປ້ອງກັນການແຜ່ລະບາດຂອງ ສັດຕູພືດທີ່ອາດຈະເກີດຂຶ້ນ, ຫຼັງຈາກປະຕິບັດການຕ້ານສັດຕູພືດແລ້ວຕ້ອງເຮັດບົດລາຍງານປະເມີນຜົນການປະຕິບັດ.

3. ປະຕິບັດຄຳຂວັນໃນການຄຸ້ມຄອງສັດຕູພືດ ແລະ ພະຍາດແບບປະສົມປະສານ: ການປ້ອງກັນເປັນຫຼັກ, ການກຳຈັດແມ່ນທັນເວລາ, ຮອບດ້ານ ແລະ ມີປະສິດທິຜົນ.

**ມາດຕາ 11**. ການພົວພັນກັບຄົນໃນພື້ນທີ ແລະ ຊຸມຊົນທ້ອງຖິ່ນ

1. ຈັດຕັ້ງປະຕິບັດຕາມຂໍ້ຕົກລົງວ່າດ້ວຍກົນໄກການແກ້ໄຂຂໍ້ຂັດແຍ່ງກ່ຽວກັບການຄຸ້ມຄອງ ແລະ ປົກປັກຮັກສາປ່າໄມ້ລະຫວ່າງບໍລິສັດ ແລະ ອຳນາດການປົກຄອງບ້ານໃນຂອບເຂດການຄຸ້ມຄອງຂອງບໍລິສັດ.

2. ເຄົາລົບ ແລະ ບໍ່ລະເມີດສິດດັ້ງເດີມ ແລະ ສິດທາງກົດໝາຍຂອງຊົນເຜົ່າ ແລະ ຊຸມຊົນທ້ອງຖິ່ນ.

3. ເຄົາລົບ ແລະ ບໍ່ທຳລາຍປ່າໄມ້ ແລະ ສະຖານທີ່ທີ່ມີຄວາມໝາຍທາງດ້ານເສດຖະກິດ, ວັດທະນະທຳ, ນິເວດວິທະຍາ, ສາສະໜາ ແລະ ຄວາມຊື່ຖືຂອງຊົນເຜົ່າ ແລະ ຊຸມຊົນທ້ອງຖິ່ນ.

4. ໃນກໍລະນີທີ່ບໍລິສັດນຳໃຊ້ຄວາມຮູ້ພື້ນເມືອງ ແລະ ສິດທິທາງປັນຍາຂອງຊົນເຜົ່າສ່ວນໜ້ອຍ ຫຼື ຊຸມຊົນທ້ອງຖິ່ນ, ບໍລິສັດຕ້ອງມີຂໍ້ຕົກລົງເປັນລາຍລັກອັກສອນ, ຄວາມສະໝັກໃຈ ລະຫວ່າງຊົນເຜົ່າສ່ວຍໜ້ອຍ ຫຼື ລະຫວ່າງຊຸມຊົນທ້ອງຖິ່ນກັບບໍລິສັດ.

5. ຊົນເຜົ່າສ່ວນໜ້ອຍ ແລະ ຊຸມຊົນທ້ອງຖິ່ນມີສິດຕິດຕາມກວດກາການຈັດຕັ້ງປະຕິບັດຂໍ້ກຳນົດທີ່ລະບຸໄວ້ໃນຂໍ້ 1, 2, 3 ແລະ 4 ຂອງມາດຕານີ້. ຖ້າບໍລິສັດລະເມີດ, ບໍລິສັດຈະຕ້ອງຮັບຜິດຊອບຄ່າຊົດເຊີຍ ຫຼື ຖືກດຳເນີນຄະດີຕາມລະບຽບກົດໝາຍ.

**ມາດຕາ 12.** ການພົວພັນກັບບັນດາອົງການກົດໝາຍຂອງລັດທີ່ກ່ຽວຂ້ອງ.

1. ບັນດາການເຄື່ອນໄຫວປົກປັກຮັກສາແມ່ນຄວາມຮັບຜິດຊອບທາງດ້ານກົດໝາຍຂອງອົງການຄຸ້ມຄອງລັດທີ່ອາດຈະເກີດຂຶ້ນໃນການຄຸ້ມຄອງຂອງບໍລິສັດລວມມີ:

a) ການຄຸ້ມຄອງ, ປົກປັກຮັກສາການຜະລິດທຸລະກິດປ່າໄມ້;

b) ການຄຸ້ມຄອງ, ປົກປັກຮັກສາຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ;

c) ການຄຸ້ມຄອງ, ການນຳໃຊ້ແຮງງານ;

d) ຄຸ້ມຄອງຄວາມສະຫງົບ, ຄວາມເປັນລະບຽບຮຽບຮ້ອຍ ແລະ ປ້ອງກັນປະກົດການຫຍໍ້ທໍ້ທາງສັງຄົມ;

đ) ຄຸ້ມຄອງການເຄື່ອນໄຫວໃນຂົງເຂດຕ່າງໆກ່ຽວຂ້ອງ....

2. ກໍລະນີມີການລະເມີດກົດໝາຍພາຍໃຕ້ຄວາມຮັບຜິດຊອບທາງດ້ານກົດໝາຍຂອງອົງການຂອງລັດທີ່ເກີດຂຶ້ນໃນຂອບເຂດການຄຸ້ມຄອງຂອງບໍລິສັດ, ບໍລິສັດ ແລະ ໜ່ວຍງານທີ່ກ່ຽວຂ້ອງ ແລະ ບຸກຄົນໃນບໍລິສັດມີຄວາມຮັບຜິດຊອບໃນການປະສານງານ ແລະ ຮ່ວມມືຢ່າງໃກ້ຊິດກັບອົງການຂອງລັດທີ່ກ່ຽວຂ້ອງ. (ອຳນາດການປົກຄອງ, ຕຳຫຼວດ, ທະຫານ, ປ່າໄມ້, ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ແຮງງານ...) ເພື່ອປ້ອງກັນ, ກວດກາ ແລະ ຢັ້ງຢືນການລະເມີດໃນການຄຸ້ມຄອງການເຄື່ອນໄຫວທີ່ກ່າວໄວ້ໃນຂໍ້ 1 ຂອງມາດຕານີ້.

**ມາດຕາ 13**. ການແກ້ໄຂການລະເມີດ

1. ບັນດາໜ່ວຍງານຂອງບໍລິສັດ ແລະ ພະນັກງານກຳມະກອນທັງໝົດຂອງບໍລິສັດທີ່ລະເມີດຕໍ່ກົດລະບຽບສະບັບນີ້ ຈະຕ້ອງຮັບຜິດຊອບຕໍ່ກົດໝາຍຂອງ ສປປ ລາວ ແລະ ຂອງບໍລິສັດ.

2. ຫົວໜ້າໜ່ວຍງານທີ່ຂຶ້ນກັບບໍລິສັດມີຄວາມຮັບຜິດຊອບດັ່ງນີ້:

a) ແກ້ໄຂ ການລະເມີດຂອງອົງການຈັດຕັ້ງ ແລະ ບຸກຄົນໃນໜ່ວຍງານຂອງຕົນຕາມລະບຽບການຂອງບໍລິສັດ. ໃນກໍລະນີເກີນສິດໃນການແກ້ໄຂ, ໃຫ້ລາຍງານຄະນະນຳບໍລິສັດເພື່ອພິຈາລະນາ ແລະ ຕັດສິນ.

b) ສຳລັບການກະທຳ, ການລະເມີດຂອງອົງການຈັດຕັ້ງ, ບຸກຄົນນອກບໍລິສັດທີ່ເກີດຂຶ້ນໃນຂອບເຂດຂອງໜ່ວຍງານ, ຫົວໜ້າໜ່ວຍງານແມ່ນຮັບຜິດຊອບໃນການເຈລະຈາ ຫຼື ປະສານສົມທົບກັບອຳນາດການປົກຄອງບ້ານເພື່ອແກ້ໄຂບັນຫາດັ່ງກ່າວ. ໃນກໍລະນີເກີນສິດໃນການແກ້ໄຂ, ໃຫ້ລາຍງານຕໍ່ຄະນະນຳລິສັດເພື່ອພິຈາລະນາ ແລະ ຕັດສິນ.

3. ຄະນະນຳບໍລິສັດແກ້ໄຂການລະເມີດທີ່ບໍ່ຂຶ້ນກັບສິດ ຫຼື ເກີນສິດຂອງໜ່ວຍງານ, ບຸກຄົນພາຍໃນບໍລິສັດ ແລະ ຕາມໜ້າທີ່ຮັບຜິດຊອບວຽກງານທີ່ກຳນົດໄວ້ໃນລະບຽບການຄຸ້ມຄອງຂອງບໍລິສັດ.

4. ຄະນະນຳບໍລິສັດມີໜ້າທີ່ປະສານງານກັບອຳນາດການປົກຄອງທຸກຂັ້ນ ແລະ ອົງການທີ່ກ່ຽວຂ້ອງໃນການແກ້ໄຂການລະເມີດການຄຸ້ມຄອງ ແລະ ປົກປັກຮັກສາປ່າໄມ້ຂອງບັນອົງການຈັດຕັ້ງ ແລະ ບຸກຄົນພາຍນອກບໍລິສັດ.

ການລະເມີດທີ່ເກີນສິດອຳນາດຂອງບໍລິສັດຈະຖືກດຳເນີນຄະດີຕາມລະບຽບກົດໝາຍກົດຫມາຍ.

**ພາກທີ III**
**ການຈັດຕັ້ງປະຕິບັດ**

**ມາດຕາ 14.** ຄວາມຮັບຜິດຊອບໃນການຈັດຕັ້ງປະຕິບັດ

1. ບັນດາໜ່ວຍງານ ແລະ ພະນັກງານກຳມະກອນທັງໝົດໃນບໍລິສັດມີຄວາມຮັບຜິດຊອບໃນການຈັດຕັ້ງປະຕິບັດຕາມກົດລະບຽບຂ້າງເທິງ.

2. ບັນດານິຄົມ, ຫ້ອງການບໍລິສັດມີໜ້າທີ່ກວດກາ, ແກ້ໄຂການລະເມີດການຄຸ້ມຄອງ ແລະ ປົກປັກຮັກສາປ່າໄມ້ ເປັນປະຈຳ ພິເສດແມ່ນການປົກປັກຮັກສາສັດສາວາສິ່ງທີ່ຫາຍາກ, ແລະມີຄຸນຄ່າສູງ.

3. ຫົວໜ້າບັນດາຫ້ອງ, ຄະນະວິຊາສະເພາະ, ໜ່ວຍງານທີ່ຂຶ້ນກັບບໍລິສັດມີໜ້າທີ່ຕິດຕາມກວດກາການຈັດຕັ້ງ ປະຕິບັດບັນດາກົດລະບຽບຂ້າງເທິງ, ເຮັດບົດລາຍງານປະຈຳໄຕມາດໃນທ້າຍເດືອນ 03, 06, 09 ແລະ ເດືອນ 12 ສົ່ງໃຫ້ຫ້ອງການບໍລິສັດ ສັງລວມຂໍ້ມູນ ແລະ ລາຍງານໃຫ້ຄະນະນຳບໍລິສັດໃນການຈັດຕັ້ງປະຕິບັດຕາມກົດລະບຽບສະບັບນີ້.

**ມາດຕາ 15.** ກົດລະບຽບສະບັບນີ້ມີຜົນບັງຄັບໃຊ້ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ. ໃນການຈັດຕັ້ງປະຕິບັດ, ຖ້າມີເນື້ອໃນທີ່ຕ້ອງປັບປຸງ, ເພີ່ມເຕີມ, ບັນດາໜ່ວຍງານ ຫຼື ບຸກຄົນທີ່ຮັບຜິດຊອບລາຍງານອຳນວຍການບໍລິສັດເພື່ອພິຈາລະນາ ແລະ ແກ້ໄຂ.

**ອຳນວຍການບໍລິສັດ**

ກະຊວງ ກະສິກຳ ແລະ ປ່າໄມ້ ບໍລິສັດ ດັກລັກ ຣັອເບີ ຈຳກັດ DAKLAK RUBBER CO.,LTD ແຂວງ ຈຳປາສັກ

Nguyễn Đức Hạnh

*ບ່ອນສົ່ງ:*
- ຄະນະອຳນວຍການບໍລິສັດ;
- ຫ້ອງການບໍລິສັດ;
- ບັນດາໜ່ວຍງານ;
- ສຳເນົາ ຂາອອກ-ຂາເຂົ້າ ແລະ ຄະນະ FSC.